# ກ່ຽວກັບ **ກົດປະຕິບັດ** ຂອງ **SBS**

SBS ແມ່ນບໍລິການ ໂທລະພາບ, ວິທະຍຸ ແລະ ສື່ດິຈິຕອນແຫ່ງຊາດທີ່ເປັນເອກະລາດໂດຍມີຄວາມຮັບຜິດຊອບຕໍ່ຊຸມຊົນອອສເຕຣລຽນຕາມທີ່ໄດ້ກຳນົດໄວ້ໃນ**ກົດບັດຂອງພວກເຮົາ**. ພວກເຮົາໄດ້ຮັບການສະໜັບສະໜູນ ຈາກ ລັດຖະບານ ອອສເຕຣເລັຍ ແລະ ລາຍໄດ້ຈາກການຄ້າເຊັ່ນການໂຄສະນາ.



ໃນທົ່ວເຄືອຂ່າຍຂອງພວກເຮົາ, ເຮົາແບ່ງປັນການເລົ່າເລື່ອງທີ່ໂດດເດັ່ນຂອງ ອອສເຕຣເລັຍ, ຂ່າວສານພາຍໃນແລະຕ່າງປະເທດ ແລະ ເຫດການ ປະຈຸບັດ, ກິລາ, ລະຄອນ ແລະ ສາລະຄະດີນາໆຊາດ, ອາຫານ, ຊີເນມາ, ແລະ ການບໍລິການວິທະຍຸທ້ອງຖິ່ນໃນຫຼາຍກ່ວາ 60 ພາສາ. ນອກຈາກນີ້ ພວກເຮົາຍັງເປັນແຫຼ່ງຂອງການເລົ່າເລື່ອງກ່ຽວກັບ ປະຖົມຊາດ (First Nations), ໂດຍໂທລະພາບແຫ່ງຊົນຊາດພື້ນເມືອງ (National Indigenous Television - NITV) ໃຫ້ບໍລິການໂປແກຼມຜ່ານເລນສ໌ສາຍຕາຂອງຊົນຊາວພື້ນເມືອງ.

ເພື່ອໃຫ້ແນ່ໃຈວ່າເນື້ອຫາຂອງພວກເຮົາຖືກຕາມຄວາມຄາດຫວັງຂອງຊຸມຊົນ, ພວກເຮົາມີກົດການປະຕິບັດ ຂອງ SBS, ເຊິ່ງ ກຳນົດກົດລະບຽບແລະມາດຕະ ຖານ ສໍາລັບເນື້ອຫາ SBS ທັງໝົດບໍ່ວ່າທ່ານຈະເຂົ້າເຖິງຈາກທາງໃດ - ທາງໂທລະພາບ, ວິທະຍຸ, ອອນລາຍນ໌ ຫຼື ທາງສື່ໂຊຊຽລ.

ກົດປະຕິບັດ ກວມເອົາເລື້ອງສຳຄັນຕ່າງໆ ເຊັ່ນ.

## ຄວາມໄວ້ວາງໃຈ

### ພວກເຮົາສະໜອງເນື້ອຫາທີ່ໜ້າເຊື່ອຖືແລະມີຄວາມກ່ຽວຂ້ອງແນວໃດ

- ພວກເຮົາຕັດສິນໃຈຢ່າງເປັນອິດສະຫຼະກ່ຽວກັບເນື້ອຫາຂອງພວກເຮົາ.
- ເນື້ອຫາຂ່າວສານແລະເຫດການປະຈຸບັນຂອງພວກເຮົາແມ່ນຖືກຕ້ອງ, ສົມດຸນແລະບໍ່ລໍາອຽງ, ແລະ ເພື່ອຜົນປະໂຫຍດຂອງສາທາລະນະ.
- ພວກເຮົາຮັບເອົາບັນດາມຸມມອງແລະທັດສະນະທີ່ສົມບູນແບບ - ເນື້ອຫາ  ຂອງພວກເຮົາສາມາດມີລັກສະນະສ້າງສັນແລະທ້າທາຍພ້ອມທັງມີການໂຕ້ຖຽງ ແລະ ການກະຕຸ້ນ.

## ຄວາມໂປ່ງໃສ

### ພວກເຮົາຊ່ວຍແນະນຳການເລືອກເນື້ອຫາຂອງທ່ານແນວໃດ

- ພວກເຮົາໃຫ້ຂໍ້ມູນເພື່ອໃຫ້ທ່ານສາມາດເລືອກເອົາເນື້ອຫາທີ່ເໝາະສົມກັບທ່ານ, ຣວມເຖິງບັນດາເດັກນ້ອຍແລະຊາວໜຸ່ມໃນການດູແລຂອງທ່ານ.
- ພວກເຮົາຮັບປະກັນວ່າການໂຄສະນາແມ່ນແຕກຕ່າງຈາກເນື້ອຫາຂອງພວກເຮົາແລະ ຕັ້ງກົດລະບຽບກ່ຽວກັບການຈັດວາງການໂຄສະນາບາງປະເພດ.
- ສໍາລັບເນື້ອຫາທີ່ອາດສ້າງຄວາມວິຕົກກັງວົນ, ພວກເຮົາຈະພິຈາລະນາຜູ້ຊົມທີ່ມີແນວໂນ້ມວ່າຈະເປັນຜູ້ຊົມທີ່ໃຊ້ຄວາມລະອຽດອ່ອນ, ໃຫ້ ຄໍາເຕືອນໃນບ່ອນທີ່ ເໝາະສົມ, ແລະ ສະແດງສະເພາະເນື້ອຫາດັ່ງກ່າວຖ້າມັນມີຄວາມກ່ຽວຂ້ອງກັບດ້ານບັນນາທິການ.

## ຄວາມເຄົາລົບ

### ພວກເຮົາປະຕິບັດແລະສົ່ງເສີມການເຄົາລົບແນວໃດ

- ພວກເຮົາຫຼີກລ້ຽງເນື້ອຫາທີ່ສົ່ງເສີມຄວາມລໍາອຽງແລະການຈໍາແນກລວມທັງການ ນໍາໃຊ້ແນວຄິດທີ່ບໍ່ຍຸຕິທໍາໂດຍນໍາເອົາສະພາບການມາພິຈາລະນາ.
- ພວກເຮົາໃຫ້ເນື້ອຫາເປັນພາສາຕ່າງໆນອກເໜືອຈາກພາສາອັງກິດແລະຊຸກຍູ້ການສະແດງຄວາມຄິດເຫັນທີ່ກວ້າງຂວາງ.
- ພວກເຮົາມີຄວາມຮູ້ສຶກໄວຕໍ່ການນໍາສະເໜີ ບັນຫາຂອງຊົນຊາວພື້ນເມືອງແລະ ສັງເກດເບິ່ງພິທີການທາງວັດທະນະທໍາ ຂອງ ຊາວອາບໍຣິຈິໂນລ ແລະ ທໍເຣສສະເທຣັດໄອແລນເດີຣ໌.
- ພວກເຮົາເຄົາລົບຄວາມເປັນສ່ວນຕົວຂອງປະຊາຊົນ ເຊິ່ງພວກເຮົາມີຄວາມສົມດຸນກັບຄວາມຮັບຜິດຊອບໃນການລາຍງານຂອງພວກເຮົາ.

## ຄວາມຮັບຜິດຊອບ

### ພວກເຮົາມີຄວາມຮັບຜິດຊອບແນວໃດ

- ພວກເຮົາຈັດໃຫ້ມີວິທີການໃຫ້ຄໍາຄິດເຫັນກ່ຽວກັບເນື້ອຫາແລະການບໍລິການຂອງພວກເຮົາແກ່ທ່ານ, ບໍ່ວ່າຈະເປັນການຍ້ອງຍໍ ຫຼື ການວິຈານ.
- ພວກເຮົາມີຂັ້ນຕອນທີ່ເປັນອິດສະຫຼະສໍາລັບການຮ້ອງຮຽນພາຍໃຕ້ກົດຂອງການປະຕິບັດ, ຊຶ່ງໄດ້ຮັບການກວດສອບໂດຍ ຜູ້ກວດກາຂອງ SBS (SBS Ombudsman).




SBS

ຊອກຮູ້ຕື່ມ

sbs.com.au/aboutus/sbs-code-of-practice